# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 10

## ການໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ

## Advertising by the Legal Aid

### 1. ຄວາມໝາຍ ແລະ ນະໂຍບາຍຂອງລັດກ່ຽວກັບການໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ

ການໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນການຕອບຂໍ້ຂ້ອງໃຈ, ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານກົດໝາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນກ່ຽວກັບຫຼັກການ, ລະບຽບການ ແລະ ມາດຕະການຂອງກົດໝາຍ ໃຫ້ແກ່ຜູ້ຮ້ອງຂໍ ຫຼື ສະເໜີຂໍຄຳປຶກສາທາງດ້ານກົດໝາຍໄດ້ຮັບຮູ້ ແລະ ເຂົ້າໃຈກົດໝາຍ, ຊ່ວຍໃຫ້ປະຊາຊົນ ສາມາດເຂົ້າເຖິງ ແລະ ນຳໃຊ້ກົດໝາຍ ເຂົ້າໃນພຶດຕິກຳຕົວຈິງ ໄດ້ຢ່າງຖືກຕ້ອງ[1].

ລັດແຫ່ງ ສປປ ລາວ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍດ້ວຍການກຳນົດນະໂຍບາຍ, ນິຕິກຳ, ການສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ, ສະຖານທີ່ເຮັດວຽກ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

ລັດຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນວຽກງານໃຫ້ຄຳປຶກສາທາງດ້ານກົດໝາຍ ຫຼື ເອີ້ນວ່າການຊ່ວຍເຫຼືອທາງດ້ານກົດໝາຍ.

### 2. ຄວາມໝາຍໃນການໃຫ້ຄຳປຶກສາທາງດ້ານກົດໝາຍ

ກ່ອນຈະເຂົ້າໃຈເຖິງນິຍາມກ່ຽວກັບການໃຫ້ຄຳປຶກສາທາງດ້ານກົດໝາຍ ພວກເຮົາຄວນສຶກສາຄຳນິຍາມທະນາຍຄວາມແມ່ນໃຜເສຍກ່ອນ ແລ້ວ ພວກເຮົາຈຶ່ງສຶກສາ ການໃຫ້ຄຳປຶກສາທາງດ້ານກົດໝາຍ. ສຳລັບທະນາຍ ຄວາມແລ້ວ ມີນິຍາມດັ່ງນີ້: ທະນາຍຄວາມແມ່ນ ບຸກຄົນທີ່ໄດ້ຮັບອະນຸຍາດຈາກລັດ ໃຫ້ເຄື່ອນໄຫວວິຊາຊີບ ໃນການໃຫ້ບໍລິການທາງດ້ານກົດໝາຍແກ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ ທັງຮັບປະກັນຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແນ່ນອນວ່າ ທະນາຍຄວາມກໍມີຈັນຍາບັນຂອງຕົນເອງ. ຈັນຍາບັນສະເພາະຂອງທະນາຍຄວາມນັ້ນ ໝາຍ

[1] ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020, ໝວດທີ 2, ມາດຕາ 17.

ເຖິງ ກົດລະບຽບພາຍໃນຂອງສະພາທະນາຍຄວາມ ກ່ຽວກັບຄຸນສົມບັດ, ຫຼັກການປະພຶດ ແລະ ການເຄື່ອນໄຫວວິຊາຊີບຂອງທະນາຍຄວາມ.

ໃນພາສາລາວພວກເຮົາ ຕາມວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດ ສັງຄົມແຫ່ງຊາດ 2012 ຄຳສັບປຶກສາ ຫຼື ເປິກສາ ເປັນຄຳກຳມະ (ໜ້າ 641) ໝາຍເຖິງ ຂໍຄວາມເຫັນ, ຫາລືກັນ, ພິຈາລະນານຳກັນ;

ສະນັ້ນ, ການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນຕາມມາດຕາ 23 ຂອງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ)ເລກທີ 06 /ສພຊ ລົງວັນທີ 09 ພະຈິກ 2016 ການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນການໃຫ້ ຄຳເຫັນ, ຄຳແນະນຳ, ຄຳອະທິບາຍທາງ ດ້ານກົດໝາຍ ທາງປາກເປົ່າ ຫຼື ເປັນລາຍລັກອັກສອນແກ່ລູກຄວາມ ຫຼື ຊ່ວຍເຫຼືອລູກຄວາມ ໃນການຮ່າງສັນຍາ, ພິໄນກຳ ແລະ ເອກະສານອື່ນ.

ຢູ່ໃນນີ້ເຮົາຈະສັງເກດເຫັນໄດ້ວ່ານິຍາມການໃຫ້ຄຳປຶກສາທາງກົດໝາຍຂອງທະນາຍຄວາມ ຈະເນັ້ນບາງປະໂຫຍກ, ບາງຄຳສັບ ດັ່ງຕໍ່ໄປນີ້ເຊັ່ນ: ການໃຫ້ຄຳເຫັນ, ຄຳແນະນຳ, ຄຳອະທິບາຍທາງ ດ້ານກົດໝາຍ ທາງປາກເປົ່າ ຫຼື ເປັນລາຍລັກອັກສອນແກ່ລູກຄວາມ ຫຼື ຊ່ວຍເຫຼືອລູກຄວາມ ໃນການຮ່າງສັນຍາ, ພິໄນກຳ ແລະ ເອກະສານອື່ນ.

**3. ຄວາມສຳຄັນໃນການໃຫ້ຄຳປຶກສາທາງດ້ານກົດໝາຍ**

ການໃຫ້ຄຳປຶກສາທາງດ້ານກົດໝາຍມີຄວາມສຳຄັນດັ່ງນີ້ :

- ຊ່ວຍຊອກເອົາຂໍ້ມູນຫຼັກຖານ ແລະ ລຽງລຳດັບຄວາມສຳຄັນຂອງບັນຫາທີ່ເກີດຂຶ້ນ;
- ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາຂອງ ລູກຄວາມ;
- ຊ່ວຍແກ້ໄຂບັນຫາຂອງ ລູກຄວາມ;
- ຊ່ວຍໃນການປະກອບຫຼັກຖານໃຫ້ແກ່ອົງການສືບສວນ-ສອບສວນ, ໄອຍະການ ແລະ ສານ;
- ຊ່ວຍໃຫ້ການດຳເນີນຄະດີເປັນໄປຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ;
- ຊ່ວຍໃນການການຂຽນຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການດຳເນີນຄະດີ.

**4. ຫຼັກການໃຫ້ຄຳປຶກສາດ້ານກົດໝາຍ ແລະ ຊ່ວຍເຫຼືອດ້ານກົດໝາຍ**

ການໃຫ້ຄຳປຶກສາດ້ານກົດໝາຍ ແລະ ຊ່ວຍເຫຼືອດ້ານກົດໝາຍ ຢູ່ ສປປ ລາວ ແມ່ນປະຕິບັດດັ່ງນີ້:

1) ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກປະຊາຊົນປະຕິວັດລາວ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ ສປປ ລາວ;

2) ສະເໝີພາບຕໍ່ໜ້າກົດໝາຍ;

3) ໃຫ້ການບໍລິການໂດຍບໍ່ຄິດຄ່າ;

4) ມີຄວາມຮັບຜິດຊອບສູງ, ໂປ່ງໃສ ແລະ ເປັນທຳ;

5) ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ;

6) ຮັກສາຄວາມລັບ.

## 5. ຈຸດປະສົງໃນການໃຫ້ຄໍາປຶກສາທາງດ້ານກົດໝາຍ

ການໃຫ້ຄໍາປຶກສາທາງດ້ານກົດໝາຍມີຈຸດປະສົງ ສະໜອງຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບບັນ ຫາ ກົດ ໝາຍ ແກ່ຜູ້ມາຂໍຄໍາປຶກສາ ຈາກທະນາຍຄວາມ ເປັນຕົ້ນ ກ່ຽວກັບບັນຫາທີ່ມາຂໍຄໍາປຶກສາ ນັ້ນມີ ກົດໝາຍ ກໍານົດໄວ້ ຫຼື ບໍ່ , ຖ້າມີແມ່ນກົດໝາຍໃດ , ລະອຽດກໍານົດໄວ້ແນວໃດ , ຢູ່ມາດຕາໃດຈາກ ນັ້ນກໍໃຫ້ຄໍາແນະນໍາວ່າ ຄວນເຮັດ ແນວ ໃດຈຶ່ງຈະຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍດັ່ງກ່າວ, ຖ້າມີການລະເມີດ ຈະມີຜົນສະທ້ອນ ແນວໃດ.

## 6. ການໃຫ້ຄໍາປຶກສາດ້ານກົດໝາຍ ແລະ ການຊ່ວຍເຫຼືອດ້ານກົດໝາຍ

ການໃຫ້ຄໍາປຶກສາດ້ານກົດໝາຍ ແລະ ການຊ່ວຍເຫຼືອດ້ານກົດໝາຍ ແມ່ນການເຄື່ອນໄຫວທາງກົດໝາຍທີ່ ມີຫຼາຍປັດໄຈສະເພາະ. ຈຸດພິເສດສະເພາະເຫຼົ່ານັ້ນມີ:

- ແມ່ນການເຄື່ອນໄຫວອອກແຮງງານ ທາງດ້ານມັນສະໝອງໃນລະດັບສູງ ໂດຍແມ່ນຊ່ຽວຊານດ້ານກົດ ໝາຍເປັນຜູ້ປະຕິບັດ;

- ແມ່ນການເຄື່ອນໄຫວທີ່ຮຽກຮ້ອງຈະຕ້ອງມີເຕັກນິກວິຊາຊີບສູງ;

- ແມ່ນການເຄື່ອນໄຫວສັງລວມ, ປະສົມປະສານຢ່າງກົມກຽວລະຫວ່າງການວິໄຈ ແລະ ການສັງລວມກົດ ໝາຍ, ເກັບກໍາແລະຕີລາຄາຫຼັກຖານ, ເກັບກໍາ, ນໍາໃຊ້ກົດໝາຍ ແລະ ນິຕິກໍາຕ່າງໆ ການຢັ້ງຢືນ, ວິທີການແກ້ໄຂ, ຊຶ່ງການເຄື່ອນໄຫວຕ່າງໆ ເຫຼົ່ານີ້ແມ່ນດໍາເນີນພ້ອມໆກັນ ແລະ ເກີດຂຶ້ນໃນເວລາດຽວກັນ;

- ເປັນການເຄື່ອນໄຫວທີ່ມີຫຼາຍຮູບຫຼາຍສີໃນການປະສົມປະສານເຕັກນິກຕ່າງໆໃນເວລາດຽວກັນເຊັ່ນຟັງ, ເວົ້າ, ວິໄຈ, ສັງລວມ, ອະທິບາຍ, ເຜີຍແຜ່, ຊີ້ເຫດຊີ້ຜົນ, ວິທີການແກ້ໄຂ, ແນະນໍາຕັກເຕືອນ, ເກັບກໍາເອກະສານ, ໄກ່ເກ່ຍບັນດາເປົ້າໝາຍດ້ວຍກັນ ... ;

- ປົກກະຕິຄູ່ກໍລະນີບໍ່ມັກປ່ຽນແປງໃນແນວຄວາມຄິດ, ເບິ່ງຜິດເຂວກ່ຽວກັບພຶດຕິກໍາຂອງເປົ້າໝາຍ ແລະ ຄວາມຮູ້ສຶກຕໍ່ການແກ້ໄຂຂອງອົງການລັດ;

- ຄູ່ກໍລະນີມີຄວາມຕ້ອງການຊອກຮູ້ກົດໝາຍຢ່າງແທ້ຈິງ.

ເປົ້າໝາຍຂອງການໃຫ້ຄໍາປຶກສາດ້ານກົດໝາຍແມ່ນລູກຄ້າ.

ໃນຕົວຈິງມັກຈະມີລູກຄ້າ2ປະເພດຄືລູກຄ້າພາຍໃນແລະລູກຄ້າຕ່າງປະເທດຊຶ່ງອາດຈະແມ່ນທະນາຍຄວາມ, ຜູ້ທີ່ບໍ່ແມ່ນທະນາຍຄວາມ,ບັນດາບໍລິສັດນ້ອຍ, ໃຫຍ່, ບຸກຄົນແລະເປົ້າໝາຍອື່ນໆ.

ອາດຈະແມ່ນທະນາຍຄວາມ, ຜູ້ທີ່ບໍ່ແມ່ນທະນາຍຄວາມແຕ່ເປັນຜູ້ຕາງໜ້າໃຫ້ບໍລິສັດພາຍໃນຫຼືບໍລິສັດຕ່າງປະເທດທີ່ໄດ້ຮັບການສ້າງຕັ້ງຕາມກົດໝາຍສປປລາວ, ພົນລະເມືອງທົ່ວໄປ,ການຈັດຕັ້ງຕ່າງໆ. ເວລາພົບປະກັບທະນາຍຄວາມທີ່ໃຫ້ຄຳປຶກສາ, ລູກຄ້າພາຍໃນມັກຈະສະແດງອອກພາຍໃຕ້ສອງລັກສະນະດັ່ງນີ້:

- ມັກມີແນວຄວາມຄິດອັດຕະວິໄສ, ໝາຍຄວາມວ່າເວລາໃດກໍຖືຕົນເອງເປັນຝ່າຍຖືກຢູ່ເລື້ອຍໆ. ສະນັ້ນ, ໃນເວລາພົບທະນາຍຄວາມເຂົາເຈົ້າຈະໃຊ້ທຸກວິທີທາງ ເພື່ອໃຫ້ທະນາຍຄວາມເຂົ້າໃຈຄືກັນກັບຕົນເອງ, ໝາຍວ່າໃຫ້ທະນາຍຄວາມເຂົ້າໃຈວ່າລູກຄ້າກາລັງເປັນຝ່າຍຖືກຕ້ອງ. ໃນກໍລະນີນີ້ລູກຄ້າອາດຈະເປັນຝ່າຍທີ່ຖືກຕ້ອງແທ້ແຕ່ກໍບໍ່ສາມາດປະຕິເສດກໍລະນີລູກຄ້າໃນຕົວ, ໃຊ້ເລ່ລ່ຽມ, ປິດບັງຄວາມຈິງທະນາຍຄວາມຈະຕ້ອງອະທິບາຍເພື່ອໃຫ້ເຂົາເຈົ້າລາຍງານຢ່າງຊັດເຈນ, ສະໜອງຂໍ້ມູນທີ່ຈຳເປັນໃຫ້ແກ່ຕົນ. ບົນພື້ນຖານນັ້ນທະນາຍຄວາມທີ່ໃຫ້ຄຳປຶກສາຈະດຳເນີນຂັ້ນຕອນຕ່າງໆທີ່ຈະໄດ້ກ່າວໃນຕອນຕໍ່ໄປ.

- ລັກສະນະທີສອງແມ່ນຮູ້ວ່າຕົນເອງຜິດ, ມີຫຼັກຖານຢັ້ງຢືນຢ່າງຄົບຖ້ວນແຕ່ກໍຍັງເຈດຕະນາປົກປ້ອງຄວາມຜິດຂອງຕົນ. ລູກຄ້າໃນກໍລະນີນີ້ແມ່ນຢາກໃຫ້ທະນາຍຄວາມປ່ຽນຈາກອັນຜິດມາເປັນອັນຖືກເພື່ອເຂົາຈະໄດ້ຜົນປະໂຫຍດ. ລູກຄ້າອາດຈະຢາກໃຫ້ທະນາຍຄວາມສະໜອງບາງຢ່າງທີ່ຈຳເປັນໃຫ້ເຂົາເພື່ອເຂົາຈະໄດ້ຊຸດຄົ້ນຜົນປະໂຫຍດຈາກສິ່ງທີ່ຜິດນັ້ນ. ບາງເທື່ອກໍອາດຈະຂໍໃຫ້ທະນາຍຄວາມຊ່ວຍເພື່ອໃຫ້ເຂົາຜ່ານຜ່າສິ່ງທີ່ຜິດພາດແນໃສ່ຫຼຸດຜ່ອນຄວາມເສຍຫາຍ ຫຼື ການໃຊ້ແທນຄ່າເສຍຫາຍຊຶ່ງເຂົາຈະຕ້ອງຮັບຜິດຊອບຍ້ອນພຶດຕິກຳຂອງຕົນເອງ. ຢ່າງໃດກໍຕາມ, ໃນກໍລະນີລະອຽດທະນາຍຄວາມອາດຈະຊ່ວຍລູກຄ້າຂອງຕົນໝູນໃຊ້ຂໍ້ກຳນົດຕ່າງໆ ຂອງກົດໝາຍເພື່ອຫຼຸດຜ່ອນຄວາມຮັບຜິດຊອບໃຫ້ເຂົາເຈົ້າ.

**ສຳລັບລູກຄ້າຕ່າງປະເທດ:**

ອາດຈະແມ່ນບັນດານັກທຸລະກິດ, ທະນາຍຄວາມ, ບໍລິສັດນ້ອຍ, ໃຫຍ່, ອົງການຈັດຕັ້ງທີ່ຕັ້ງຢູ່ໃນດິນແດນຂອງ ສປປ ລາວ ແຕ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມກົດໝາຍສາກົນ. ບັນດາບໍລິສັດ, ອົງການຈັດຕັ້ງ, ນັກທຸລະກິດຕ່າງປະເທດແມ່ນຜູ້ທີ່ຮູ້ກົດໝາຍ, ມີລະດັບວິຊາສະເພາະສູງ, ມີຄວາມສາມາດໃນການຄຸ້ມຄອງ ແລະ ມີຫົວສະໝອງໃນການຈັດຕັ້ງ. ຄວາມຮຽກຮ້ອງຕ້ອງການຂອງລູກຄ້າສາກົນປົກກະຕິແມ່ນຈະແຈ້ງ, ມີກົກມີປາຍ. ຍ້ອນແນວນັ້ນ, ໃນເວລາເຮັດວຽກກັບລູກຄ້າປະເພດນີ້ທະນາຍຄວາມຂອງພວກເຮົາຈະຕ້ອງສະແດງອອກຢ່າງຈະແຈ້ງເຖິງຄວາມຮູ້ຄວາມສາມາດຂອງຕົນແມ່ນຜູ້ທີ່ກຳແໜ້ນເຖິງກົກເຖິງປາຍ, ເລິກເຊິ່ງແລະກວ້າງຂວາງກ່ຽວກັບກົດໝາຍຂອງສປປລາວ. ປົກກະຕິແລ້ວສຳລັບນັກທຸລະກິດຕ່າງປະເທດແມ່ນເຂົາເຈົ້າຖືສຳຄັນມາດຕະຖານກົດໝາຍ, ສະນັ້ນໃນເວລາໃຫ້ຄຳປຶກສາກ່ອນອື່ນໝົດຈະຕ້ອງໃຫ້ຄຳປຶກສາໃນແງ່ຂອງກົດໝາຍ, ເຂົາເຈົ້າຈະບໍ່ພໍໃຈຖ້າເຮົາມີແຕ່ແນະນຳໂດຍຜ່ານປະສົບການ ຫຼື ບົດຮຽນສະເພາະຂອງຕົນຫຼືສວຍໃຊ້ຄວາມລົ້ງເຄີຍເພື່ອ "ໄປເຂົ້າປະຕູທາງຫຼັງ" ລູກຄ້າຕ່າງປະເທດກໍຖືສຳຄັນທີ່ສຸດຕໍ່ຮູບການ ແລະ ຄວາມເຊື່ອໝັ້ນໃນວິຊາຊີບ, ເພາະສະນັ້ນທະນາຍຄວາມຈະຕ້ອງ

ສະແດງຕົນເປັນຜູ້ທີ່ມີຄວາມເຊື່ອໝັ້ນ, ມີຄວາມຊ່ຽວຊານຊຳນານງານໃນອາຊີບໂດຍຜ່ານການຕິດຕໍ່ພົວພັນໂດຍກົງ ຫຼື ທາງໜັງສື (ທາງຈົດໝາຍ).

ເປົ້າໝາຍຂອງການຊ່ວຍເຫຼືອດ້ານກົດໝາຍແມ່ນພົນລະເມືອງຢູ່ໃນຂອບນະໂຍບາຍ, ຜູ້ທຸກຍາກທີ່ຕ້ອງການການຊ່ວຍເຫຼືອລ້າ, ເຂົາເຈົ້າແມ່ນຜູ້ທີ່ມີຄວາມຮຽກຮ້ອງຕ້ອງການແລະ ກໍໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍ, ສະນັ້ນເຂົາເຈົ້າກໍ່ແມ່ນລູກຄ້າປະເພດໜຶ່ງ.

**7. ປະເພດຂອງການໃຫ້ຄຳປຶກສາ**

ການໃຫ້ຄຳປຶກສາ ແບ່ງອອກເປັນ 3 ປະເພດດັ່ງນີ້:

- ການໃຫ້ຄຳປຶກສາທາງປາກເປົ່າ ນັ່ງລົມກັນ (ໃນພາສາລາວ ຄຳສັບປາກເປົ່າເປັນຄຳກຳມະ ໜ້າ 619 ວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012) ຊຶ່ງໝາຍເຖິງ : ເວົ້າ, ກ່າວ,ຈາ, ອອກສຽງໃຫ້ເປັນຄວາມເພື່ອສື່ສານໃນການລົມກັນເຊິ່ງໜ້າດ້ວຍປາກຕໍ່ປາກ.

- ການໃຫ້ຄຳປຶກສາຜ່ານການສື່ສານຕ່າງໆ : ໂທລະສັບ, ທາງແຟັກ, ທາງອີເມວ, ວອດແອບ, ທະວິດເຕີ ແລະ ອື່ນໆ.

- ການໃຫ້ຄຳປຶກສາເປັນລາຍລັກອັກສອນ

+ ຄຳປຶກສາທາງດ້ານກົດໝາຍ (Legal Advice)

ຄຳປຶກສາທາງດ້ານກົດໝາຍ ແມ່ນຄຳແນະນຳ ແລະ ຄຳອະທິບາຍທາງດ້ານກົດໝາຍ ຊຶ່ງທະນາຍຄວາມ ຈະຕ້ອງອ້າງອີງເຫດຜົນທາງດ້ານຂອງກົດໝາຍ ຫຼື ນິຕິກຳອື່ນໆ ເປັນຕົ້ນຕໍ ໃນການໃຫ້ຄຳແນະນຳ ແລະ ຄຳອະທິບາຍໃຫ້ແກ່ລູກຄ້າ ຫຼື ລູກຄວາມ ຕໍ່ກັບ ປະເດັນໃດໜຶ່ງ ທີ່ລູກຄວາມຕ້ອງການ ການແນະນຳ.

+ ຄຳເຫັນທາງດ້ານກົດໝາຍ (Legal Opinion)

ແມ່ນການຕອບຄຳຖາມແກ່ ລູກຄວາມ ໂດຍການອີງໃສ່ກົດໝາຍ ລວມທັງປະສົບການທີ່ທະນາຍຄວາມເຄີຍປະຕິບັດຜ່ານມາ ຫຼື ບັນຫາໃດທີ່ກົດໝາຍບໍ່ໄດ້ກຳນົດ ຫຼື ກຳນົດບໍ່ຈະແຈ້ງ ທະນາຍຄວາມຈະອະທິບາຍ ພ້ອມທັງຊີ້ແຈງຕາມປະສົບການຕົວຈິງທີ່ໄດ້ພົບພໍ້ ກ່ຽວກັບຄວາມເປັນໄປໄດ້ໃນບັນຫາດັ່ງກ່າວ ຊຶ່ງຈະເຮັດຂຶ້ນເປັນລາຍລັກອັກສອນ ພາຍໃຕ້ຊື່ “Legal Opinion”.

**8. ວິທີການຍົກສູງປະສິດທິຜົນຂອງການເຜີຍແຜ່ກົດໝາຍໂດຍຜ່ານການໃຫ້ປຶກສາດ້ານກົດໝາຍ ແລະ ການຊ່ວຍເຫຼືອດ້ານກົດຫມາຍ**

ເພື່ອຍົກສູງປະສິດທິຜົນຂອງວຽກງານໃຫ້ຄຳປຶກສາດ້ານກົດໝາຍ ແລະ ຊ່ວຍເຫຼືອດ້ານກົດໝາຍ, ອົງການທີ່ກ່ຽວຂ້ອງຈະຕ້ອງເອົາໃຈໃສ່ບາງບັນຫາດັ່ງນີ້:

- ສ້າງສາຍພົວພັນທີ່ດີກັບສະພາທະນາຍຄວາມ ແລະ ອົງການຊ່ວຍເຫຼືອດ້ານກົດໝາຍອື່ນໆ ເພື່ອແລກປ່ຽນຂໍ້ມູນຂ່າວສານ, ຍົກປະເດັນຄວາມຮຽກຮ້ອງຕ້ອງການຂອງວຽກງານ ໂຄສະນາເຜີຍແຜ່ນິຕິກຳ ຢູ່ແຕ່ລະພື້ນທີ່ໃນແຕ່ລະໄລຍະເພື່ອປຶກສາຫາລືແກ້ໄຂ;

- ຈັດຕັ້ງການພົບປະແລກປ່ຽນແຕ່ລະໄລຍະກ່ຽວກັບວິທີການ, ປະສົບການໃນການໂຄສະນາເຜີຍແຜ່ນິຕິກຳໂດຍຜ່ານການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍ;

- ຈັດຕັ້ງການສອບເສັງແນໃສ່ຖອດຖອນບົດຮຽນວິທີການ, ປະສົບການກ່ຽວກັບການໂຄສະນາເຜີຍແຜ່ນິຕິກຳ ໂດຍຜ່ານການໃຫ້ປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍ;

- ຈັດເຂົ້າໃນລາຍການຕ່າງໆ ທາງພາຫະນະສື່ມວນຊົນກ່ຽວກັບປະສົບການທີ່ດີໃນການໂຄສະນາເຜີຍແຜ່ນິຕິກຳ ໂດຍຜ່ານການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍ;

- ມີມາດຕະການສົ່ງເສີມຕ່າງໆ ທາງດ້ານວັດຖຸ ແລະ ຈິດໃຈຕໍ່ຜູ້ທີ່ເຮັດວຽກງານໂຄສະນາເຜີຍແຜ່ນິຕິກຳ ໂດຍຜ່ານການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອດ້ານກົດໝາຍໄດ້ດີ.

**9. ການຊ່ວຍເຫຼືອ ແລະ ແນະນຳລູກຄວາມ ( ຜູ້ມາຂໍຄວາມຊ່ວຍເຫຼືອ)**

ທະນາຍຄວາມມີພາລະໜ້າທີ່ພື້ນຖານ ສະເພາະໃນການໃຫ້ການຊ່ວຍເຫຼືອແກ່ ລູກຄວາມ ກ່ຽວກັບການກະທຳ ຜິດ ແລະ ຈັດຫາການທົດແທນ ແລະ ການຊ່ວຍເຫຼືອແກ່ບຸກຄົນທີ່ ກຳລັງມີບັນຫາ (ບຸກຄົນທີ່ອ່ອນແອ) ເພື່ອຟື້ນຟູສາຍພົວພັນທີ່ຍຸຕິທຳ ແລະ ສະເໝີພາບ ລະຫວ່າງຜູ້ ຖືກເສຍຫາຍ ແລະ ຜູ້ກະທຳຜິດ.

**ການຟັງ**: ທະນາຍຄວາມຮັບຕ້ອນ ຜູ້ຖືກເຄາະຮ້າຍ ເຂົ້າຫ້ອງການຂອງຕົນ ຫຼື ສະຖານທີ່ໃດໜຶ່ງ ເພື່ອຮັບຟັງກ່ຽວກັບ ເຫດການດ້ວຍຄວາມເອົາໃຈໃສ່ , ທະນາຍຄວາມ ຕ້ອງຮັບປະກັນຄວາມລັບ ຂອງຂໍ້ມູນດັ່ງກ່າວ.

**ການສະໜັບສະໜູນ**: ທະນາຍຄວາມປົກປ້ອງຜົນປະໂຫຍດ ຂອງລູກຄວາມຕົນ ໂດຍການໃຫ້ການຊ່ວຍເຫຼືອ ແກ່ຜູ້ຖືກເຄາະຮ້າຍ ໃຫ້ຮັບຮູ້ເຖິງປະເດັນນັ້ນ ໂດຍການນຳເອົາຫລັກຖານທີ່ຮັບໂຮມມາໄດ້ ແລະ ນຳມາກຳນົດເຫດການ ແລະ ປະເດັນການກະທຳຜິດ ແລະ ຄວາມເສັຍຫາຍ.

**ການຊ່ວຍເຫຼືອ**: ທະນາຍຄວາມໃຫ້ຄຳປຶກສາ ແລະ ຕິດຕາມຜູ້ຖືກເຄາະຮ້າຍ ໃນທຸກຂັ້ນຕອນ ການດຳເນີນຄະດີຕາມທີ່ກຳນົດໄວ້ໃນກົດໝາຍ.

**ການຕິດຕາມ**: ທະນາຍຄວາມໃຫ້ການຊ່ວຍເຫຼືອ ແກ່ລູກຄວາມ ຫຼື ຜູ້ຖືກເຄາະຮ້າຍ ໃນຕະຫລອດໄລຍະຂອງການດຳເນີນຄະດີ ຕັ້ງແຕ່ຂັ້ນການແຈ້ງຄວາມ ຈົນໄປເຖິງ ການຕັດສິນຂອງສານ ແລະ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ຂັ້ນຕອນອື່ນໆ ຕາມການຮຽກຮ້ອງຕ້ອງການຂອງລູກຄວາມ ຈົນກວ່າຄະດີຈະສິ້ນສຸດ ຕາມຂະບວນຍຸຕິທຳ (ຕາມທີ່ລູກຄວາມ ແລະ ທະນາຍຄວາມ ຕົກລົງກັນຕາມສັນຍາວ່າຄວາມ).

**References:**


1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
2. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
3. ປຶ້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
4. ຕຳລາກໍ່ສ້າງວິຊາຊີບຍຸຕິທຳ, ທັກສະການໃຫ້ຄຳປຶກສາທາງດ້ານກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
5. ປອ. ຈອມຄຳບຸບຜາລີວັນ, ປຶ້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008.